ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ກະຊວງການເງິນ
ຫ້ອງການກະຊວງ

ເລກທີ 2122 /ຫກງ

ນະຄອນຫຼວງວຽງຈັນ, ວັນທີ 05 ກັນຍາ 2019

## ໜັງສືແຈ້ງເຊີນປະມູນ

1. ກະຊວງການເງິນ, ຫ້ອງການກະຊວງ ຈະໄດ້ດຳເນີນການຈັດຊື້-ຈັດຈ້າງ ບໍລິສັດ ມາສະໜອງສັນຍານອິນເຕີເນັດ ເພື່ອມາຮັບໃຊ້ເຂົ້າໃນຂະແໜງການເງິນພາກລັດ ໂດຍນຳໃຊ້ງົບປະມານ ບ້ວງທຶນເປັນທຶນສະໄໝຂອງກະຊວງການເງິນ ປີ 2019 ດ້ວຍການປະມູນ ເປີດກວ້າງ.
2. ຫ້ອງການກະຊວງການເງິນ ຂໍເຊີນບັນດາ ບໍລິສັດ/ວິສາຫະກິດ ທີ່ສົນໃຈ ທີ່ມີຄວາມເຫມາະສົມ ເຂົ້າຍື່ນຊອງປະມູນ ສຳລັບການສະໜອງສັນຍານອິນເຕີເນັດ.
3. ການປະມູນຄັ້ງນີ້ ຈະດຳເນີນຕາມຂັ້ນຕອນ ຕາມກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນລັດ ສະບັບເລກທີ 30/-ສພຊ, ລົງວັນທີ 2 ພະຈິກ 2017 ແລະ ລະບຽບການຈັດຕັ້ງປະຕິບັດຄຳແນະນຳ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ບໍລິສັດ/ວິສາຫະກິດ ທີ່ມີຄຸນວຸດທິ ແລະ ຄວາມເຫມາະສົມ, ມີໃບອະນຸຍາດດຳເນີນ ທຸລະກິດຖືກຕ້ອງ ຕາມກົດຫມາຍ ທີ່ກ່ຽວພັນກັບໂທລະຄົມມະນາຄົມ ແລະ ການສື່ສານ, ຫນັງສືຢັ້ງຢືນການເສຍອາກອນ ປະຈຳປີ 2018 ແລະ 2019.
5. ບໍລິສັດ ທີ່ມີຄຸນນະວຸດທິ ແລະ ມີຄວາມເຫມາະສົມສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ສະຖາບັນພັດທະນາຂໍ້ມູນຂ່າວສານການເງິນ ກະຊວງການເງິນ, ໂທ: 021 417766/020 58892975. ແລະ ກວດກາເບິ່ງ ເອກະສານປະມູນ ໃນເວລາເຮັດວຽກທາງລັດຖະການ.
1. ເລີ່ມຂາຍຊອງແຕ່ວັນທີ 6/9/2019 ຫາ 8/10/2019, ເວລາປິດຮັບເອກະສານ 13:00 ໂມງ, ຊອງເອກະສານຂາຍໃນລາຄາ 1.000.000 ກີບ (ໜຶ່ງລ້ານກີບ), ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການ ສົ່ງຄືນ. ວິທີການຊຳລະຕ້ອງຈ່າຍເປັນ (ເງິນສົດ).

ຫົວໜ້າຫ້ອງການກະຊວງ

ສົມບູນ ອິນທະປັດຖາ